# ບົດນຳ

ມີຫຼາຍຂໍ້ແນະນຳໃນວຽກງານສົ່ງເສີມທີ່ປະກອບເຂົ້າໃນການຜະລິດຂອງການພັດທະນາ ການສະໜອງນ້ຳໃຫ້ພຽງພໍກັບຄວາມຕ້ອງການພືດແຕ່ລະຊະນິດ. ແຕ່ໃນນີ້ແມ່ນໄດ້ຍົກເອົາການໃຫ້ນ້ຳແກ່ເຂົ້າ ເພື່ອເປັນບ່ອນອີງ ແລະນຳໃຊ້ເຂົ້າໃນການຜະລິດ.

ເອກະສານນີ້ ເພື່ອແນະນຳແນວຄວນຄິດຫຼັກການ ແລະຂັ້ນຕອນຕ່າງໆ. ແນໃສ່ໃຫ້ມີການປັບປຸງການສະ ໜອງນ້ຳເພື່ອຍົກສະມັດທະພາບຂອງເຂົ້າ ແລະເປັນບ່ອນອີງໃຊ້ເຂົ້າໃນການສົ່ງເສີມ ເພື່ອໃຫ້ເກີດມີປະສິດທິຜົນຂອງການຜະລິດ.

## 1. ຄວາມສຳຄັນຂອງນ້ຳຕໍ່ຕົ້ນເຂົ້າລວມມີ:

- ນ້ຳເປັນພາຫະນະນຳອາຫານນ້ຳຕານ ແລະແຮ່ທາດໄປຍັງສ່ວນຕ່າງໆຂອງຕົ້ນເຂົ້າ
- ຕົ້ນເຂົ້າໃນ 1 ເຮັກຕາໃຊ້ນ້ຳຢ່າງໜ້ອຍ 8 ລ້ານລິດ (400. 000 ຖັງ) ຕະຫຼອດຊີວິດຂອງມັນ
- ຖ້າຂາດນ້ຳ, ອາກາດ ແລະແສງແດດຈະເຮັດໃຫ້ການຜະລິດອາຫານຫຼຸດລົງໂດຍທົ່ວໄປແລ້ວນ້ຳເປັນປັດໃຈຈຳກັດ.

  ສະນັ້ນຈຶ່ງແນະນຳລາຍລະອຽດໃນການສະໜອງນ້ຳແກ່ເຂົ້າ

## 2. ຊ່ວງໄລ່ຍະຫ່ວານກ້າ

- ຫຼັງຈາກຫ່ວານກ້າໃໝ່ໆ ຄວນຄ່ອຍໆ ເປັ່ງນ້ຳເຂົ້າ (ຖ້າມີ ຊປທ) ເພື່ອໃຫ້ດິນມີຄວາມຊຸ່ມຈົນກວ່າກ້າຈະຈັບດິນ (ມື້ລະ 2 ຫາ 3 ເທື່ອ) ແຕ່ຢ່າໃຫ້ນ້ຳຂັງເປັນເດັດຂາດ
- ໄລ່ຍະນີ້ບໍ່ຄວນໃຫ້ນ້ຳຖ້ວມຕົ້ນກ້າ, ລະດັບນ້ຳຈະຕ້ອງໃຫ້ພໍດີຖ້ວມໜ້າດິນປະມານ 1 ຊຕມ ກໍ່ພໍ. ໃນກໍລະນີນ້ຳຫຼາຍໂພດກໍ່ໃຫ້ປ່ອຍນ້ຳອອກ, ເມື່ອອາຍຸກ້າໄດ້ 10 ວັນ ແລ້ວກໍ່ຄວນຮັກສານ້ຳໃນລະດັບ 5 ຊຕມ ຢູ່ສະເໝີ.
- ຖ້າຫາກອຸ່ນຫະພູມຕ່ຳຫຼາຍເວລາກາງຄືນ ກໍ່ໃຫ້ເປັ່ງນ້ຳເຂົ້າຖ້ວມຕົ້ນກ້າ, ມື້ເຊົ້າມາເວລາແດດອອກຈຶ່ງຄ່ອຍເປັ່ງນ້ຳອອກໃຫ້ຢູ່ລະດັບເດີມ ຫຼືຮັກສາໄວ້ຕາມຄວາມເໝາະສົມຂອງຕົ້ນກ້າ.




**ຂໍ້ສັງເກດ:** ບໍ່ຄວນປ່ອຍໃຫ້ຕາກ້າແຫ້ງ ຫຼືລະດັບນ້ຳເລິກ ເກີນໄປ, ຖ້າຕາກ້າແຫ້ງຈະເຮັດໃຫ້ກ້າຫຼົກຍາກ (ຫຍາບ) ຫຼືເຮັດໃຫ້ກ້າຂາດຫົວໂກນ, ແຕ່ນ້ຳຫຼາຍໂພດ (ຂັງ) ຈະເຮັດໃຫ້ຕົ້ນກ້າຂີ້ນຂໍ້ ຫຼືເຮັດໃຫ້ກ້າໃບຍາວການຈະເລີນເຕີບໂຕຊ້າຈຳນວນການແຕກກໍ ກໍ່ຈະໜ້ອຍ.

## 3. ໃນຊ່ວງໄລ່ຍະປັກດຳ

- ຫຼັງຈາກປັກດຳແລ້ວຄວນຮັກສາລະດັບນ້ຳສູງປະມານ 1 ຫາ 2 ຊຕມເທົ່ານັ້ນບໍ່ໃຫ້ນ້ຳຖ້ວມຕົ້ນກ້າທີ່ຫາກໍ່ປັກດຳ
- ຖ້ານ້ຳຫຼາຍກ່ວາ 1 ຫາ 2 ຊັງຕີແມັດ ກໍ່ຈະເຮັດໃຫ້ຕົ້ນກ້າອອ່ນແອຈຳນວນການແຕກກໍກໍ່ຈະໜ້ອຍຜົນຜະລິດຕ່ຳ
- ໃນຊ່ວງນີ້ ຖ້າຫາກຂາດນ້ຳບາງຄັ້ງຄາວກໍ່ອາດບໍ່ສົ່ງຜົນສະທ້ອນຫຼາຍປານໃດແຕ່ຖ້າຂາດນ້ຳຫຼາຍ ຫຼືດົນເກີນໄປກໍ່ຈະສົ່ງຜົນສະທ້ອນເສຍຫາຍໄດ້ເຊັ່ນດຽວກັນ.




**ຂໍ້ສັງເກດ:** ໃນຊ່ວງນີ້ເຫັນວ່າການໃຫ້ນ້ຳບໍ່ຕ້ອງການນ້ຳຫຼາຍປານໃດ. ສະນັ້ນ, ໃນຊ່ວງນີ້ຈະບໍ່ສຳຄັນເທົ່າໃດມີແຕ່ຮັກສາລະດັບນ້ຳສະໝ່ຳສະເໝີຖ້າມີນ້ຳພຽງພໍ.

## 4. ຊ່ວງເລີ່ມແຕກກໍ ແລະແຕກກໍສູງສຸດ

- ໃນຊ່ວງນີ້ເຂົ້າຕ້ອງການຝຸ່ນເລັ່ງ ແລະຮັກສາລະດັບນ້ຳປະມານ 1 ຫາ 2 ຊັງຕີແມັດ, ບໍ່ໃຫ້ນ້ຳໃນນາແຫ້ງເພາະວ່າຈະເຮັດໃຫ້ຝຸ່ນເລັ່ງສູນເສຍໄປໃນອາກາດຫຼາຍ. ຝຸ່ນເລັ່ງທີ່ໃສ່ລົງດິນນາຈະປ່ຽນເປັນຮູບການໃໝ່ຍ້ອນອາກາດຮູບການນີ້ຈະປ່ຽນເປັນອາຍ ແລະສູນເສຍໄດ້ງ່າຍ
- ນ້ຳປ້ອງກັນບໍ່ໃຫ້ອາກາດຊຶມລົງດິນ ແລະຊຶມລົງໜ້ອຍເທົ່າໃດຝຸ່ນເລັ່ງຍິ່ງປ່ຽນເປັນອາຍໄດ້ໜ້ອຍເທົ່ານັ້ນ ຈຶ່ງສ້ອມແປງຄັນນາເພື່ອຫຼີກເວັ້ນການສູນເສຍນ້ຳ.



ຊ່ວງເລີ່ມແຕກກໍ ແລະແຕກກໍສູງສຸດ

**ຂໍ້ສັງເກດ:** ຊ່ວງນີ້ເປັນຊວ່ງທີ່ເຂົ້າຕ້ອງການແຮ່ທາດ, ອາຫານຕ່າງໆ ແລະນໍ້າເພື່ອລໍລ້ຽງໄປຍັງສ່ວນຕ່າງໆຂອງຕົ້ນເຂົ້າ.

## 5. ໃນຊ່ວງເຂົ້າຕັ້ງທ້ອງ (ມານ)

- ເຂົ້າໄດ້ອາຍຸແຕ່ 60 ຫາ 90 ວັນ ແມ່ນຊ່ວງເຂົ້າມານໃນຊ່ວງນີ້ແມ່ນຂາດນໍ້າບໍ່ໄດ້ເດັດຂາດຈົນເຖິງກ່ອນໜ້າເກັບກ່ຽວປະມານ 10 ວັນ. ຖ້າຂາດນໍ້າໃນຊ່ວງນີ້ຈະເຮັດໃຫ້ຜົນຜະລິດຕົກຕໍ່າ ແລະ ເສຍຫາຍໄດ້.
- ເຂົ້າມີ ຄວາມຕ້ອງການນໍ້າໃນລະດູຝົນແມ່ນ 4 ຫາ 5 ມມ / ວັນ ແລະໃນລະດູແລ້ງປະມານ 5 ຫາ 7 ມມ/ວັນ (ບໍ່ໄດ້ລວມຄ່າການຊຶມລົງພື້ນດິ ແລະສູນເສຍຕາມຄອງເໝືອງ, ທົ່ງນາຕ່າງໆ)
- ບໍ່ຄວນໃສ່ຝຸ່ນເຄມີໃນເວລານໍ້າຍັງໄຫຼຢູ່ຄວນໃຫ້ນໍ້າຢຸດນິ້ງເສຍກ່ອນ
- ເພື່ອຄວບຄຸມຫຍ້າໄດ້ດີໃນເນື້ອທີປູກເຂົ້າຄວນໃຫ້ນໍ້າຢູ່ໃນລະດັບ 5 ຫາ 10 ຊັງຕີແມັດ ຢູ່ສະເໝີ.
- ເພື່ອຮັກສາລະດັບນໍ້າໃນເນື້ອທີຄວນສ້ອງແປງຄັນນາ ໃຫ້ມີຂະໜາດ ແລະສູງພໍສົມຄວນ (30 ຊມ x 30 ຊມ) ເພື່ອບໍ່ໃຫ້ນໍ້າຮົ່ວຊຶມ.




**ຂໍ້ສັງເກດ**: ເຮົາຕີລາຄາໄດ້ວ່າໃນຊ່ວງນີ້ແມ່ນມີຄວາມສຳຄັນເພາະເຂົ້າມີຄວາມຕ້ອງການນໍ້າຫຼາຍ ແລະຂາດບໍ່ໄດ້ເດັດຂາດ. ຖ້າຂາດນໍ້າໃນຊ່ວງນີ້ຈະສົ່ງສະທ້ອນເຖິງຜົນຜະລິດຕົກຕໍ່າ ແລະເສຍຫາຍໄດ້.

## 6. ໃນຊ່ວງກ່ອນໜ້າເກັບກ່ຽວ

- ຄວນປ່ອຍນໍ້າອອກຈາກເນື້ອທີ່ນາເຂົ້າກ່ອນໜ້າເກັບກ່ຽວ 10 ວັນ ເພື່ອເຮັດໃຫ້ເຂົ້າສຸກດີ.
- ໃນຊ່ວງນີ້ເຂົ້າຕ້ອງການນໍ້າພຽງແຕ່ໃຫ້ດິນມີຄວາມຊຸ່ມຊື່ນໃນເນື້ອທີ່ການຜະລິດເທົ່ານັ້ນ.

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**

ກະຊວງກະສິກຳ ແລະ ປ່າໄມ້
ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ
ໜ່ວຍງານ ພັດທະນາຮູບແບບ ສົ່ງເສີມ ແລະ ຝຶກອົບຮົມ

# ຂໍ້ແນະນຳ

# ເຕັກນິກການໃຫນໍ້າແກ່ເຂົ້າ



ຈັດຕັ້ງປະຕິບັດໂດຍ: **CETDU**

(ໜ່ວຍງານພັດທະນາຮູບແບບ ສົ່ງເສີມ ແລະ ຝຶກອົບຮົມ ຂັ້ນສູນກາງ)

ຮ່ວມກັບ:

ໂຄງການ ສົ່ງເສີມ ກະສິກຳ **(LEAP)**